# LIWG Weekly news update from 18-23/2/2018

**………..**

**ສະຫຼຸບຂ່າວປະຈຳອາທິດລະຫວ່າງວັນທີ 18-23/2/2018 ໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ**

## English news

**President Visits Under-construction Xayaboury Hydropower Project: KPL**
***19/2/2018***
President Bounnhang Vorachit on Feb 16 visited the under-construction Xayaboury hydropower project in Xayaboury Province.
The dam is now 90 % built. Its construction kicked off in 2012 and is expected to be fully completed in 2019 when its commercial power generation will begin. The runoff-river dam has an installed generation capacity of 1,285 mw.
Most power generated by the dam will be sold to EGAT - the Electricity Generating Authority of Thailand.
*Read more: Xayaboury's hydropower construction 90 percent complete or read from here.*

**Lao firms identify high tax rates as investment constraint: Vientiane Times**
***21/2/2018***
Lao enterprises have highlighted the perceived unprofessional practices of firms in the informal sector and high tax rates as the top constraints in investing in the country, according to a report from the World Bank.
18 percent of enterprises said they were worried about access to land for investment, 18 percent believed trade regulations should be improved while 6 percent identified access to finance as a business barrier. One of the most interesting points was that only 2 percent of the surveyed firms highlighted corruption in the country as a problem for business.
*The article also can be found here.*

**4 Firms To Conduct Feasibility Studies For Vientiane-Pakse Highway: KPL**
***21/2/2018***
The government has chosen China Yunnan Sunny Road and Bridge Company, China Road and Bridge Cooperation, Phousy Construction and Development Public Company and Douangchaleun Development Group for conducting feasibility studies into the Vientiane-Pakse Highway Construction Project.
The plan on the development of Vientiane-Pakse highway is related to the Vientiane-Hanoi highway project (Vientiane-Paksan-Laksao (Laos-Vietnam border) which is another highway project that will be built. The immediate step will be the negotiation of signing an MoU on conducting a feasibility study and a technical design.

**National Economic Research Institute Urged To Conduct Studies, Keep Government Up To Date: KPL**
***21/2/2018***
Prime Minister Thongloun Sisoulith assigned the National Economic Research Institute to conduct a study on the use of hydropower energy and minerals to best benefit the socio-economic development, reassess the establishment of special economic zones across the country with a focus placed on the pros and cons of the establishment, and review the poverty reduction of the people and sustainable development.

**Town declaration for Luang Prabang's Phou Khoun : Vientiane Times**
***22/2/2018***
The new Phoukhoun district town development project in Luang Prabang province is expected to kickoff in the near future upon receiving approval from the government.
The development on 3,635 hectares is the province's priority pilot project, aiming to expand the mountainous town into a new modern centre and model for the country.
The new town development project is expected to take five years to complete with all the work carried out by Chinese developers.

Phoukhoun is home to more than 25,000 people and is one of 12 districts of Luang Prabang province. It is located along the 13 National Road linking the capital to Luang Prabang, the World Heritage Town.

**PDA Signed For Dams Construction in Xekong's Dak Chung: KPL**

*22/2/2018*

The feasibility study into the project has been conducted since July 14, 2017 and its findings were satisfactory, so the company has sought permission from local authorities to proceed with developing the project.

According to the agreement, 3 small hydroelectric dams with a total installed generation capacity of 33 megawatts (annual gross generation of 139.39 gigawatts) will be built on the river.

These projects are expected to be completed in three years, according to Mr Manotham.

**Read more news in the week as below:**

Swift action to fill national coffers called for as Cabinet meets: Vientiane Times

Hongsa-Xiengman road completion rescheduled to end of year: Vientiane Times

Govt submitting 15 drafted laws for parliamentary debate: Vientiane Times

Hotline helps government administration: Vientiane Times

## ຂ່າວພາສາລາວ

**ບໍລິສັດເອກກະຊົນຈີນ ໄດ້ຮັບສຳປະທານ ໂຄງການກໍ່ສ້າງທາງ Highway ຢູ່ໃນລາວ: ຂ່າວໂດຍ ຈຳປາໂພສ**

*ວັນທີ 18 ກຸມພາ 2018*

ກະຊວງໂຍທາທິການ ແລະຂົນສົ່ງ ລາຍງານວ່າ ຄະນະລັດຖະບານລາວ ໄດ້ຕົກລົງອະນຸຍາດສຳປະທານ ໂຄງການກໍ່ສ້າງຖະໜົນຫລວງ ຫຼື Highway ທີ່ເຊື່ອມຕໍ່ຈາກນະຄອນວຽງຈັນ ໄປເມືອງວັງວຽງ ແຂວງວຽງຈັນ ໃຫ້ກຸ່ມບໍລິສັດຢຸນໜານ ວິສະວະກຳແລະ ກໍ່ສ້າງຈາກຈີນ ເມື່ອບໍ່ດົນມານີ້ ໂດຍເປັນສ່ວນຫນຶ່ງ ຂອງໂຄງການເຊື່ອມຕໍ່ທາງຫລວງລະຫວ່າງ ລາວ-ຈີນ ທີ່ຢູ່ພາຍໃຕ້ແຜນການຫນຶ່ງແລວທາງ-ຫນຶ່ງເສັ້ນທາງ ຫຼື One Belt-One Road ທີ່ລິເລີ່ມໂດຍທ່ານສີ ຈິ້ນຜິງ ປະທານປະເທດຈີນ.

ເຊິ່ງ ເງິນທຶນແມ່ນມີມູນຄ່າລວມ 1,300 ລ້ານໂດລາ ທີ່ເປັນການຮ່ວມທຶນ ລະຫວ່າງລັດຖະບານລາວ ກັບກຸ່ມບໍລິສັດຢຸນໜານ ໃນສັດສ່ວນ 5 % ຕໍ່ 95 % ຂອງການລົງທຶນ ໃນຮູບແບບ BOT ແລະ ມີອາຍຸສຳປະທານ 30 ປີ ໂດຍເລີ່ມແຕ່ປີ 2021 ເປັນຕົ້ນໄປ.

*ອ່ານຂ່າວທີ່ກ່ຽວ: ການກໍ່ສ້າງທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງຈະລົງມືໄວໆນີ້ ໂດຍແມ່ນບໍລິສັດຈາກຈີນ ຈະເປັນຜູ້ລົງທຶນ ໂດຍລາວເຮົາຖືຮຸ້ນ 5%*

**ໂຄງການພັດທະນາຕົວເມືອງໃໝ່ ເມືອງພູຄູນໃນເນື້ອທີ່ 3635 ເຮັກຕາ ມີມູນຄ່າ 2323 ຕື້ກີບ!: ຂ່າວໂດຍ ປະກາດ**

*ວັນທີ 20 ກຸມພາ 2018*

ທ່ານຮອງນາຍົກລັດຖະມົນຕີ ລົງຕິດຕາມຊຸກຍູ້ໂຄງການພັດທະນາຕົວເມືອງໃໝ່ ເມືອງພູຄູນໃນເນື້ອທີ່ 3.635 ເຮັກຕາ.

ໂຄງການດັ່ງກ່າວມີເນື້ອທີ່ສຳຫຼວດທັງໝົດ 3.635 ເຮັກຕາ, ໃນນັ້ນເນື້ອທີ່ເທດສະບານເມືອງມີ 729 ເຮັກຕາ, ພື້ນທີ່ລອກສັດ 2.219 ເຮັກຕາ, ເນື້ອທີ່ນາ 69 ກວ່າເຮັກຕາ, ພື້ນທີ່ປ່າຟື້ນຟູ 617 ກວ່າເຮັກຕາ ແລະ ມີເສັ້ນທາງເກົ່າ 6.100 ແມັດ ແລະ ໄດ້ຮັບການເຊັນບົດບັນທຶກຄວາມເຂົ້າໃຈໃນການສຳຫຼວດ-ອອກແບບ ໂຄງການປັບປຸງ ແລະ ຂະຫຍາຍຕົວເມືອງພູຄູນ ນັບແຕ່ປີ 2015 ເປັນຕົ້ນມາ ໂດຍແມ່ນບໍລິສັດ ຫຼີຊື້ ຄຳມ່ວນກໍ່ສ້າງ ແລະ ສ້ອມແປງເຄຫະສະຖານ ຈຳກັດຜູ້ດຽວ ເປັນຜູ້ຮັບ ເໝົາໃນການສຳຫຼວດ-ອອກແບບ ແລະ ໂຄງການມີມູນຄ່າທັງໝົດ 2 ພັນ 323 ຕື້ກວ່າກີບ.

*ອ່ານເພີ່ມເຕີມຂ່າວທີ່ກ່ຽວຂ້ອງ: ທ່ານ ຮອງນາຍົກລັດຖະມົນຕີ ສອນໄຊ ສີພັນດອນ ລົງຊຸກຍູ້ ການພັດທະນາຢູ່ 2 ເມືອງຂອງແຂວງຫຼວງພະບາງ*

**ທົ່ວປະເທດມີຄະດີກ່ຽວກັບສິ່ງແວດລ້ອມເກີດຂຶ້ນ 10 ກວ່າກໍລະນີ: ຂ່າວໂດຍ ລາວພັດທະນາ**

*ວັນທີ 20 ກຸມພາ 2018*

ໃນທົ່ວປະເທດມີຄະດີສິ່ງແວດລ້ອມເກີດຂຶ້ນທັງໝົດ 12 ກໍລະນີ, ກັກຕົວຜູ້ຕ້ອງຫາໄດ້ 24 ຄົນ (ຕ່າງປະເທດ 5 ຄົນ) ໃນຂໍ້ຫາທຳລາຍປ່າໄມ້. ນອກນີ້ ຍັງໄດ້ລົງກວດກາບັນດາບໍລິສັດ, ໂຮງຈັກ-ໂຮງງານ ແລະ ຟາມລ້ຽງສັດຕ່າງໆ 16 ຄັ້ງ, ໄດ້ແກ້ໄຂໂຮງງານທີ່ມີການລັກລອບປຸງແຕ່ງທາດເຄມີຢູ່ບ້ານເມືອງນ້ອຍ ເມືອງເສດຖາ ນະຄອນຫຼວງວຽງຈັນ, ແກ້ໄຂເຄື່ອງຕັດໄມ້ ທີ່ວາງຂາຍຕາມທ້ອງຕະຫຼາດ ແລະ ຫ້າງຮ້ານທີ່ບໍ່ໄດ້ຮັບອະນຸຍາດ.

**ເຊັນອະນຸມັດສ້າງເຂື່ອນ 3 ແຫ່ງໃສ່ຫ້ວຍເຢີງເມືອງດາກຈຶງ: ຂ່າວໂດຍ ເສດຖະກິດ-ສັງຄົມ**

*ວັນທີ 21 ກຸມພາ 2018*

ອົງການປົກຄອງແຂວງເຊກອງ ຕາງໜ້າໂດຍພະແນກແຜນການ ແລະ ການລົງທຶນແຂວງໄດ້ອະນຸມັດໃຫ້ບໍລິສັດ ເອັມພີ (MP) ກໍ່ສ້າງຜູ້ດຽວ ເປັນຜູ້ສືບຕໍ່ພັດທະນາໂຄງການກໍ່ສ້າງ ເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ 3 ແຫ່ງ ໃສ່ນ້ຳເຢີງ ໂດຍມີທີ່ຕັ້ງຢູ່ເມືອງດາກຈຶງ.

ໂຄງການດັ່ງກ່າວແມ່ນໄດ້ດຳເນີ ການສຶກສາສຳຫຼວດຄວາມເປັນໄປໄດ້ມາແຕ່ເດືອນ ກໍລະກົດປີ 2014 ແລ້ວ ເຫັນວ່າໄດ້ຜົນໃນທິດທາງທີ່ເພິ່ງພໍໃຈ ສະນັ້ນ ບໍລິສັດຈຶ່ງຂໍອະນຸຍາດສືບຕໍ່ພັດທະນານຳພາກລັດຂອງແຂວງໂດຍໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍນ້ຳເຢີງທັງ 3 ແຫ່ງມີກຳລັງຕິດຕັ້ງລວມ 33 ເມກາວັດ ແລະ ສາມາດຜະລິດກະແສໄຟຟ້າໄດ້ທັງໝົດ 136.39 ກິກາວັດໂມງຕໍ່ປີ. ເຊິ່ງທັງ 3 ໂຄງການນີ້ຄາດວ່າຈະໃຊ້ເວລາໃນການກໍ່ສ້າງ 3 ປີ ຈຶ່ງສຳເລັດ.

**ລາວຄົ້ນພົບແຮ່ທາດແລ້ວເກືອບ 600 ຈຸດ: ຂ່າວໂດຍ ເສດຖະກິດ-ສັງຄົມ**

*ວັນທີ 21 ກຸມພາ 2018*

ໂດຍຜ່ານການສຳຫຼວດໃນຂອບເຂດທົ່ວປະເທດ ຮອດປະຈຸບັນສາມາດພົບເຫັນຈຸດທີ່ປາກົດມີແຮ່ທາດແລ້ວເກືອບ 600 ຈຸດ ໃນເນື້ອທີ່ທັງໝົດ 68.46% ຂອງເນື້ອທີ່ທົ່ວປະເທດ ແລະ ລັດຖະບານອະນຸມັດໃຫ້ມີການຂຸດຄົ້ນ ແລະ ສຳຫຼວດ, ປຸງແຕ່ງແຮ່ທາດແລ້ວ 649 ບໍລິສັດ ລວມມີ 942 ກິດຈະການ. ສຳລັບການລົງທຶນເພື່ອພັດທະນາດ້ານບໍ່ແຮ່ໃນລາວ ໂດຍສະເພາະແມ່ນການລົງທຶນຂອງຈີນ ແມ່ນນັບມື້ນັບເພີ່ມຂຶ້ນ ເຊິ່ງໃນປັດຈຸບັນມີ 52 ໂຄງການຂອງຜູ້ລົງທຶນຈາກປະເທດຈີນໄດ້ຮັບອະນຸມັດຈາກລັດຖະບານລາວທີ່ພວມດຳເນີນການຂຸດຄົ້ນ ແລະ ປຸງແຕ່ງ ພ້ອມດຽວກັນນັ້ນກໍ່ຍັງມີ 20 ກວ່າໂຄງການຢູ່ໃນຊ່ວງການດຳເນີນການຂຸດຄົ້ນ, ສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້.

ໃນການລົງທຶນຂອງຈີນຢູ່ ສປປລາວ ໂດຍສະເພາະດ້ານພະລັງງານ ແລະ ບໍ່ແຮ່ມີທັງໝົດ 10 ຕື້ກວ່າໂດລາ ເທົ່າກັບ 80 ພັນຕື້ກີບ.

**ອ່ານບາງຫົວຂໍ້ທີ່ສຳຄັນປະຈຳອາທິດໄດ້ເພີ່ມເຕີມ:**

ບັນຫາທີ່ດິນ ແລະ ເບີກຈ່າຍເງິນເດືອນ ເປັນປະເດັນທີ່ສັງຄົມໂທມາຮ້ອງຮຽນຫຼາຍກວ່າໝູ່: ຂ່າວໂດຍ ເສດຖະກິດການຄ້າ

ຊັດເຈນ ບໍ່ມີກາຊີໂນແຊກຊ້ອນໃນໂຄງການພັດທະນາເດີ່ນດິນເກົ່າວັງວຽງ: ຂ່າວໂດຍ ເສດຖະກິດ-ສັງຄົມ

ຜົນກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນກຸມພາ: ຂ່າວໂດຍ ເສດຖະກິດ-ສັງຄົມ

ເຈົ້າໂຄງການເຂື່ອນນ້ຳຂອງ ແຂວງໄຊຍະບູລີ ລາຍງານທ່ານປະທານປະເທດວ່າ ສຳເລັດແລ້ວ 90%: ຂ່າວໂດຍ ອິດສະຫຼະ

ທາງລົດໄຟຢຸດກໍ່ສ້າງ ສະຫຼອງປີໃໝ່ຈີນ: ຂ່າວໂດຍ ວິທະຍຸເອເຊຍເສຣີ

ທ່ານນາງສຸວັນເພັງສືບຕໍ່ລົງເກັບກຳຂໍ້ມູນດ້ານທາງນ້ຳ ແລະ ທາງອາກາດ: ຂ່າວໂດຍ ເສດຖະກິດການຄ້າ